ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ 1053 /ຄພນ
ນະຄອນຫຼວງວຽງຈັນ, ວັນທີ 09 Aug 2011

ເຖິງ: ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ລາຍງານຂໍ້ມູນການຈ້າງງານ.

- ອີງຕາມ ແຈ້ງການກ່ຽວກັບການລາຍງານສະພາບລາຄາສິນຄ້າປະຈຳອາທິດ ແລະ ປະຈຳເດືອນ ສະບັບເລກທີ 1029/ອຄ.ຄພນ, ລົງວັນທີ 02/06/2011.

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອເກັບກຳຂໍ້ມູນ "ການຈ້າງງານ" (ຕາຕະລາງ 4.3, 4.4 ແລະ 4.5 ໄດ້ຄັດຕິດມາພ້ອມນີ້) ຊຶ່ງແມ່ນຕາຕະລາງເພີ່ມເຕີມທີ່ໄດ້ກຳນົດໄວ້ໃນວັກສຸດທ້າຍ ຂໍ້1 ຂອງແຈ້ງການສະບັບເລກທີ 1029/ອຄ.ຄພນ, ລົງວັນທີ 02/06/2011:

1. ຕາຕະລາງ 4.5: ແມ່ນຕາຕະລາງເກັບກຳການຈ້າງງານໃນຂະແໜງການຄ້າຢູ່ໃນແຂວງ, ນະຄອນຫຼວງ ຊຶ່ງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີໜ້າທີ່ສັງລວມການລາຍງານຂອງບັນດາເມືອງພາຍໃນແຂວງຂອງຕົນ ເພື່ອລາຍງານໃຫ້ກົມການຄ້າພາຍໃນ ກ່ອນວັນທີ 20 ຂອງເດືອນທັນວາ.

2. ຕາຕະລາງ 4.4: ແມ່ນຕາຕະລາງເກັບກຳການຈ້າງງານໃນຂະແໜງການຄ້າພາຍໃນເມືອງ, ຊຶ່ງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ມີໜ້າທີ່ສັງລວມການລາຍງານຂອງບັນດາຫົວໜ່ວຍທຸລະກິດ, ຫ້າງຮ້ານຕ່າງໆທີ່ມີທະບຽນວິສາຫະກິດ ແລະ ບໍ່ມີທະບຽນວິສາຫະກິດ ເພື່ອລາຍງານໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ກ່ອນວັນທີ 15 ຂອງເດືອນທັນວາ.

ສ່ວນຫ້າງຮ້ານທີ່ບໍ່ມີທະບຽນວິສາຫະກິດ ແມ່ນວິຊາການຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງເປັນຜູ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປະເມີນການຈ້າງງານໃຫ້ແທດເໝາະ ແລະ ໃກ້ຄຽງກັບຄວາມເປັນຈິງ.

3. ຕາຕະລາງ 4.3: ແມ່ນຕາຕະລາງການຈ້າງງານຂອງຫົວໜ່ວຍທຸລະກິດ, ຫ້າງຮ້ານຕ່າງໆ ທີ່ມີທະບຽນວິສາຫະກິດ ຈະຕ້ອງໄດ້ຈົດກ່າຍໃສ່ຕາຕະລາງ 4.3 ຕາມລາຍການລະອຽດຕົວຈິງ ເພື່ອລາຍງານໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ກ່ອນວັນທີ 5 ຂອງເດືອນທັນວາ.

4. ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເກັບສຳເນົາໃບລາຍງານການຈ້າງງານຂອງແຕ່ລະຫົວໜ່ວຍທຸລະກິດພາຍໃນເມືອງ ໄວ້ໃນແຟ້ມສະເພາະ ສຳລັບແຕ່ລະປີ .

5. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເກັບສຳເນົາໃບລາຍງານການຈ້າງງານ ຂອງແຕ່ລະເມືອງ ພາຍໃນແຂວງ ໄວ້ໃນແຟ້ມສະເພາະ ສຳລັບແຕ່ລະປີ.

6. ຄວາມໝາຍ "ການຈ້າງງານ" ໃນຕາຕະລາງ 4.3, 4.4 ແລະ 4.5 ແມ່ນ "ການຈ້າງງານໃນຂະແໜງການຄ້າ" ເຊັ່ນວ່າ: ການຈ້າງງານຢູ່ໃນບໍລິສັດສົ່ງອອກ-ນຳເຂົ້າ, ບໍລິສັດຂາຍຍົກ, ຮ້ານຂາຍຍ່ອຍ (ຫ້າງຮ້ານຄ້າຂາຍຕ່າງໆ, ຮ້ານມິນິມາເກັດ, ຮ້ານຊຸບເປີມາເກັດ, ຮ້ານຊັບພະສິນຄ້າ, ຮ້ານຄ້າຂາຍຍົກ-ຂາຍຍ່ອຍ, ຮ້ານຄ້າປອດພາສີ), ກຸ່ມບໍລິສັດທີ່ດຳເນີນທຸລະກິດຫຼາຍຂະແໜງການ ແມ່ນໃຫ້ຈົດເອົາຈຳນວນແຮງງານທີ່ຕິດພັນກັບການຊື້-ຂາຍສິນຄ້າ. (ຍົກເວັ້ນ ໂຮງງານຈັກໂຮງງານ, ສະຖານທີ່ກໍ່ສ້າງ, ສາງປະຈຳດ່ານ, ຮ້ານອາຫານ, ໂຮງແຮມ ແລະ ບັນດາສະຖານທີ່ ບໍລິການຕ່າງໆ).

7. ແຮງງານທັງໝົດ ແມ່ນລວມທັງແຮງງານຈ້າງ (ຫຼື ລູກຈ້າງ) ແລະ ແຮງງານທີ່ບໍ່ແມ່ນລູກຈ້າງ (ພີ່ນ້ອງ ແລະ ຜູ້ເປັນເຈົ້າຂອງເອງ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມການຄ້າພາຍໃນ

ດຣ. ສິມພອງ ພຽນພິນິດ

ຜູ້ປະສານງານ ທ. ບຸນຈັນ ລໍວັນໄຊ
ໂທ: 020 22037778
ໂທ/ແຟັກ 021 412001; 021 990115